ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳແລະການຄ້າ

ເລກທີ 1005 /ອຄ.ຄພນ

ນະຄອນຫຼວງວຽງຈັນ, ວັນທີ 22 May 2015

# ຂໍ້ຕົກລົງ

## ວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ, ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011.
- ອີງຕາມດຳລັດວ່າດ້ວຍທຸລະກິດຈຳໜ່າຍສິນຄ້າ, ເລກທີ 206/ນຍ, ລົງວັນທີ 10 ຕຸລາ 2001 ;

**ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ :**

## ພາກທີ I
## ຫຼັກການທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການເຄື່ອນໄຫວດຳເນີນທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ, ເພື່ອຄຸ້ມຄອງການສ້າງຕັ້ງ ແລະ ການເຄື່ອນໄຫວໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ໂດຍມີການຄຸ້ມຄອງຢ່າງລວມສູນ ແລະ ຈັດສັນຢ່າງເປັນລະບົບ ແນໃສ່ ສ້າງຄວາມສະດວກ ແລະ ປົກປ້ອງຜູ້ຊົມໃຊ້, ສ້າງລາຍຮັບເຂົ້າງົບປະມານແຫ່ງລັດ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ ສັງຄົມຂອງຊາດ.

### ມາດຕາ 2 ການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ

ການຄ້າຂາຍຍົກໝາຍເຖິງ ການຈຳໜ່າຍສິນຄ້າແບບຂາຍຍົກໃຫ້ບຸກຄົນ ຫລື ນິຕິບຸກຄົນ ເພື່ອເອົາໄປຜະລິດຕໍ່, ຂາຍຍົກຕໍ່ ແລະ ຂາຍຍ່ອຍ.

ການຄ້າຂາຍຍ່ອຍໝາຍເຖິງ ການຈຳໜ່າຍສິນຄ້າແບບຂາຍຍ່ອຍ ໃຫ້ບຸກຄົນ ຫລື ຄົວເຮືອນ ເພື່ອຊົມໃຊ້ ແລະ ບໍລິໂພກ.

**ມາດຕາ 3 ນະໂຍບາຍຂອງລັດຕໍ່ການດຳເນີນທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ**

ລັດຊຸກຍູ້, ສົ່ງເສີມ ໃຫ້ບຸກຄົນ ແລະ ນິຕິບຸກຄົນ ພາຍໃນ ດຳເນີນທຸລະກິດຂາຍຍົກ ແລະ ຂາຍຍ່ອຍດ້ວຍການວາງລະບຽບການ, ມາດຕະການ, ການສະໜອງຂໍ້ມູນຂ່າວສານ, ການບໍລິການ ແລະ ຄວາມສະດວກອື່ນໆ.

ບຸກຄົນ ແລະ ນິຕິບຸກຄົນ ຕ່າງປະເທດ ສາມາດດຳເນີນທຸລະກິດ ການຄ້າຂາຍຍົກ ແລະ ຂາຍຍ່ອຍໄດ້ ແຕ່ຕ້ອງປະຕິບັດຕາມເງື່ອນໄຂ ທີ່ກຳນົດໃນຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 4 ຫຼັກການພື້ນຖານກ່ຽວກັບການດຳເນີນທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ**

ການເຄື່ອນໄຫວທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຢູ່ ສປປ ລາວ ຕ້ອງປະຕິບັດຕາມຫຼັກການພື້ນຖານຕົ້ນຕໍດັ່ງນີ້:

1. ຮັບປະກັນສິດ ແລະ ຜົນປະໂຫຍດອັນຊອບທຳຂອງລັດ, ຜູ້ດຳເນີນທຸລະກິດ ແລະ ຜູ້ຊົມໃຊ້;
2. ມີຄວາມໂປ່ງໃສໃນການດຳເນີນທຸລະກິດ ແລະ ຮັບປະກັນການແຂ່ງຂັນທີ່ເປັນທຳ;
3. ສອດຄ່ອງກັບກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດຂາຍຍົກ ແລະ ຂາຍຍ່ອຍຢູ່ ສປປ ລາວ.

## ພາກທີ II

## ຮູບການ, ການສ້າງຕັ້ງ ແລະ ການດຳເນີນທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ

### ໝວດທີ 1

### ຮູບການທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ

**ມາດຕາ 6 ຮູບການທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ**

ຮູບການທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ປະກອບດ້ວຍ :

1. ຮູບການທົ່ວໄປ;
2. ຮູບການຕາມສັນຍາ;
3. ຮູບການຕົວແທນຈຳໜ່າຍ (Agent) ;
4. ຮູບການການຄ້າຂາຍຕໍ່ (Resell).